ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ:256/ທຫລ

ນະຄອນຫລວງວຽງຈັນ, ວັນທີ 24 MAY 2001

# ຂໍ້ຕົກລົງ

## ວ່າດ້ວຍ ກຳນົດເວລາການສົ່ງລາຍງານທາງການບັນຊີ ຫຼື ທາງການເງິນ

-ອີງຕາມ ກົດໝາຍ ວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14/10/1999

-ອີງຕາມ ການຄົ້ນຄ້ວາ ແລະ ນຳສະເໜີ ຂອງກົມບັນຊີ-ການເງິນ, ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ແລະ ສູນເຕັກໂນໂລຊີ ແລະ ການສື່ສານ ຂໍ້ມູນທະນາຄານ

*ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕົກລົງ:*

<u>ມາດຕາ 1</u>: ການສົ່ງຂໍ້ມູນປະຈຳວັນດ້ວຍຄອມພິວເຕີ ຫຼື Softcopy

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕ້ອງລວບລວມຂໍ້ມູນທົ່ວລະບົບຂອງຕົນ ສົ່ງຂໍ້ມູນເປັນປະຈຳວັນດ້ວຍ Softcopy (ຂໍ້ມູນເບື້ອງຕົ້ນ) ຮອດທະນາຄານແຫ່ງ ສປປ ລາວ (ສູນ ICTB) ໃຫ້ສຳເລັດກ່ອນ 09:00 ໂມງເຊົ້າ ຂອງມື້ຕໍ່ມາ.

<u>ມາດຕາ 2</u>: ການສົ່ງຂໍ້ມູນປະຈຳເດືອນ, ງວດ ແລະ ປີ

2.1. ຂໍ້ມູນປະຈຳເດືອນ, ງວດ ແລະ ປີ ໝາຍເຖິງ ຂໍ້ມູນ Softcopy ແລະ Hardcopy ທີ່ໄດ້ລວບລວມທົ່ວລະບົບຂອງຕົນ, ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ, ຄວາມຄົບຖ້ວນ, ແລະ ມີຄວາມສອດຄ່ອງທຸກປະການ.

<u>2.2. ການສົ່ງຂໍ້ມູນດ້ວຍ Softcopy</u> :

2.2.1. ທະນາຄານທຸລະກິດທີ່ບໍ່ມີສາຂາຢູ່ຕ່າງແຂວງໃຫ້ສົ່ງຂໍ້ມູນດ້ວຍ Softcopy ຮອດ ທະນາຄານແຫ່ງ ສປປ ລາວ ສຳເລັດພາຍໃນ 3 ວັນ (ສາມວັນລັດຖະການ) ຂອງເດືອນຕໍ່ມາ.

2.2.2. ທະນາຄານທຸລະກິດທີ່ມີສາຂາຢູ່ຕ່າງແຂວງ ແຕ່ບໍ່ມີສາຂາຢູ່ຕ່າງປະເທດ ໃຫ້ສົ່ງ ສົ່ງຂໍ້ມູນດ້ວຍ Softcopy ຮອດ ທະນາຄານແຫ່ງ ສປປ ລາວ ສຳເລັດພາຍໃນ 5 ວັນ (ຫ້າວັນລັດຖະການ) ຂອງເດືອນຕໍ່ມາ.

2.2.3. ທະນາຄານທຸລະກິດທີ່ມີສາຂາຢູ່ຕ່າງແຂວງ ແລະ ຢູ່ຕ່າງປະເທດໃຫ້ສົ່ງ ສົ່ງຂໍ້ມູນດ້ວຍ Softcopy ຮອດ ທະນາຄານແຫ່ງ ສປປ ລາວ ສຳເລັດພາຍໃນ 7 ວັນ (ເຈັດວັນລັດຖະການ) ຂອງເດືອນຕໍ່ມາ.

2.3. ສົ່ງຂໍ້ມູນດ້ວຍເອກະສານ ຫຼື Hardcopy :

2.3.1. ທະນາຄານທຸລະກິດທີ່ບໍ່ມີສາຂາຢູ່ຕ່າງແຂວງໃຫ້ສົ່ງຂໍ້ມູນດ້ວຍ Hardcopy ຮອດ ທະນາຄານແຫ່ງ ສປປ ລາວ ສຳເລັດພາຍໃນ 5 ວັນ (ຫ້າວັນລັດຖະການ) ຂອງເດືອນຕໍ່ມາ.

2.3.2. ທະນາຄານທຸລະກິດທີ່ມີສາຂາຢູ່ຕ່າງແຂວງ ແຕ່ບໍ່ມີສາຂາຢູ່ຕ່າງປະເທດ ໃຫ້ສົ່ງ ຂໍ້ມູນດ້ວຍ Hardcopy ຮອດ ທະນາຄານແຫ່ງ ສປປ ລາວ ສຳເລັດພາຍໃນ 7 ວັນ (ເຈັດວັນລັດຖະການ) ຂອງເດືອນຕໍ່ມາ.

2.3.3. ທະນາຄານທຸລະກິດທີ່ມີສາຂາຢູ່ຕ່າງແຂວງ ແລະ ຢູ່ຕ່າງປະເທດໃຫ້ສົ່ງ ຂໍ້ມູນດ້ວຍ Hardcopy ຮອດ ທະນາຄານແຫ່ງ ສປປ ລາວ ສຳເລັດພາຍໃນ 10 ວັນ (ສິບວັນລັດຖະການ) ຂອງເດືອນ ຕໍ່ມາ,.

ມາດຕາ 3:

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ຕ້ອງຕອບສະໜອງຕາມແບບພິມລາຍງານທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ທັງປົກກະຕິ ແລະ ເປັນແຕ່ລະໄລຍະ.

ມາດຕາ 4:

ທະນາຄານທຸລະກິດ ແລະ ສະຖາບັນການເງິນໃດ ບໍ່ສາມາດປະຕິບັດຂໍ້ຕົກລົງ ສະບັບນີ້ ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ນຳໃຊ້ລະບຽບຕາມຄຳຕົກລົງຂອງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 14/ທຫລ, ລົງວັນທີ 28/01/1998,

ມາດຕາ 5:

ມອບໃຫ້ບັນດາກົມ, ຫ້ອງການ ພາຍໃນທະນາຄານແຫ່ງ ສປປ ລາວ, ບັນດາ ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານ ແຫ່ງ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ,

ມາດຕາ 6:

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນ ແທນ ຂໍ້ທີ 3 ຂອງ ຄຳຕົກລົງ ສະບັບເລກທີ 14/ທຫລ, ລົງວັນທີ 28/01/1998,

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ